ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້
ຂາເຂົ້າ ເລກທີ 1690
ລົງວັນທີ 17/9/12

16/10

ລະຖາວອນ

ເລກທີ 2071 /ກປ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2012

# ຄຳແນະນຳ

## ກ່ຽວກັບການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ຂອງຂະແໜງກະສິກຳ ແລະ ປ່າໄມ້

ເຖິງ:
- ທ່ານຫົວໜ້າຫ້ອງການ, ກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້
- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ
- ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ

- ອີງຕາມ ມະຕິຕົກລົງ ຂອງກົມການສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ
- ອີງຕາມ ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 11/ຄລສພ, ລົງວັນທີ 28 ມີນາ 2012.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ **ສະບັບ**ເລກທີ 16/ນຍ, ລົງວັນທີ 15 ມິຖຸນາ 2012 ວ່າດ້ວຍການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.
- ອີງຕາມ ຄຳແນະນຳ ຂອງລັດຖະມົນຕີວ່າການກະຊວງພາຍໃນ ສະບັບເລກທີ 01/ພນ, ລົງວັນທີ 13 ກໍລະກົດ 2012.
- ອີງຕາມຄຳສັ່ງແນະນຳເພີ່ມເຕີມຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 21/ຄລສພ, ລົງວັນທີ 07 ສິງຫາ 2012.

ເພື່ອຈັດຕັ້ງຜັນຂະຫຍາຍມະຕິ, ຄຳສັ່ງ, ຄຳແນະນຳ ຂ້າງເທິງ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ໃນທົ່ວຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມເອກະພາບ ແລະ ປະກົດຜົນເປັນຈິງ ທັງມີປະສິດທິຜົນນັ້ນ,

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ ດັ່ງນີ້:**

**1. ຈຸດປະສົງ ແລະ ລະດັບຄາດໝາຍ**

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ເນື້ອໃນ, ໜ້າທີ່, ຄວາມຮັບຜິດຊອບ, ຄາດໝາຍສູ້ຊົນ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ດ້ານກະສິກຳ ແລະ ປ່າໄມ້ ຢູ່ນະຄອນຫຼວງວຽງຈັນ ແລະ ທຸກແຂວງ, 51 ເມືອງ ແລະ 105 ບ້ານ ໃນທົ່ວປະເທດ ຕາມການກຳນົດຂອງລັດຖະບານ ໃນວຽກກະສິກຳ ແລະ ປ່າໄມ້ ເພື່ອແນໃສ່ເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງຂະແໜງການກະສິກຳ ແລະ ປ່າໄມ້ ມີຄວາມຄ່ອງຕົວ ຊ່ວຍໃຫ້ແຂວງ, ເມືອງ ແລະ ບ້ານເປົ້າໝາຍທົດລອງ ສາມາດຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງດ້ານກະສິກຳ ແລະ ປ່າໄມ້ ແນໃສ່ເຮັດໃຫ້ແຂວງ, ເມືອງ ມີການຫັນປ່ຽນດີຂຶ້ນ, ພັດທະນາບ້ານ ກ້າວໄປເຖິງເປັນບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້.

2. ຄວາມໝາຍສຳຄັນ ຂອງ 3 ສ້າງໃນຂະແໜງກະສິກຳ ແລະ ປ່າໄມ້

ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາໃນຂະແໜງກະສິກຳ ແລະ ປ່າໄມ້ ແມ່ນຂະບວນການປັບປຸງການຄຸ້ມຄອງ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອ:

1. ເສີມຂະຫຍາຍສິດເປັນເຈົ້າ ແລະ ຍົກສູງຄວາມຮັບຜິດຊອບ ຂອງທ້ອງຖິ່ນ ແລະ ຮາກຖານ ໃນການຂຸດຄົ້ນ, ນຳໃຊ້ທ່າແຮງ ແລະ ຄວາມສາມາດບົ່ມຊ້ອນ ຂອງຕົນເຂົ້າໃນການບໍລິຫານຄຸ້ມຄອງກະສິກຳ ແລະ ປ່າໄມ້.
2. ນຳເອົາແນວທາງຂອງພັກ ແລະ ແຜນການຂອງລັດດ້ານກະສິກຳ ແລະ ປ່າໄມ້ ລົງໄປຈັດຕັ້ງປະຕິບັດ ຢູ່ຮາກຖານໃຫ້ແທດເຖິງ ໂດຍສົ່ງເສີມໃຫ້ປະຊາຊົນ ແລະ ຄອບຄົວຊາວກະສິກອນ ຜູ້ເຮັດການຜະລິດ ໄດ້ມີສ່ວນຮ່ວມຢ່າງເປັນເຈົ້າການ ໃນຂະບວນການພັດທະນາກະສິກຳ ແລະ ປ່າໄມ້.
3. ເຮັດໃຫ້ການຜະລິດ, ເສດຖະກິດກະສິກຳ ແລະ ປ່າໄມ້ ມີການຂະຫຍາຍຕົວ, ຍົກລະດັບຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ.

3. ເນື້ອໃນ ແລະ ຄາດໝາຍ ການເຮັດທົດລອງ 3 ສ້າງ ໃນຂົງເຂດກະສິກຳ ແລະ ປ່າໄມ້

3.1 ເນື້ອໃນ ແລະ ຄາດໝາຍ ຂອງກະຊວງ (ກົມ, ສະຖາບັນ, ຫ້ອງການ) ໃນການປະຕິບັດ 3 ສ້າງ

1. ຄົ້ນຄວ້າຜັນຂະຫຍາຍແນວທາງ, ມະຕິ ຂອງພັກ ເປັນຍຸດທະສາດ, ເປັນແຜນການ, ແຜນງານ, ໂຄງການລະອຽດ ໃນຂະແໜງການກະສິກຳ ແລະ ປ່າໄມ້.
2. ຄົ້ນຄວ້າກຳນົດ ຫຼື ປັບປຸງ ນະໂຍບາຍ, ມາດຖານເຕັກນິກ, ລະບຽບການ ແລະ ສະເໜີປັບປຸງ ແລະ ສ້າງກົດໝາຍ ທີ່ກ່ຽວຂ້ອງ ສຳລັບຄຸ້ມຄອງຂະແໜງການ ໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ. ຄົ້ນຄວ້າຜັນຂະຫຍາຍບັນດາກົດໝາຍ ທີ່ກ່ຽວພັນກັບຂະແໜງການກະສິກຳ ແລະ ປ່າໄມ້ ມາເປັນນິຕິກຳລຸ່ມກົດໝາຍ ຂອງຂະແໜງການຕົນ.
3. ກຳນົດຕຳແໜ່ງງານ ໃຫ້ລະອຽດກ່ຽວກັບແຜນຄວາມຕ້ອງການ ບັນຈຸລັດຖະກອນ ຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຂອງບັນດາເມືອງທົດລອງ, ສູນບໍລິການເຕັກນິກ.
4. ຄົ້ນຄວ້າ, ທົດລອງວິທະຍາສາດ, ເຕັກນິກ, ເຕັກໂນໂລຊີດ້ານກະສິກຳ ແລະ ປ່າໄມ້ ແລະ ນຳເອົາຜົນການຄົ້ນຄວ້າ, ທົດລອງດັ່ງກ່າວ ເຜີຍແຜ່ແນະນຳເຂົ້າໃນການຜະລິດກະສິກຳ ແລະ ປ່າໄມ້ຂອງຊາວກະສິກອນ ແລະຜູ້ປະກອບການ.
5. ແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ ແລະ ຜົນປະໂຫຍດ ໃນການຄຸ້ມຄອງວຽກງານ ຂອງຂະແໜງການຕົນໃຫ້ທ້ອງຖິ່ນຄືນໃໝ່, ແບ່ງງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະ ທີ່ຈຳເປັນ ໃຫ້ລະອຽດຈະແຈ້ງຂາດຕົວ ໂດຍຕິດພັນກັບການແຕ່ງຕັ້ງພະນັກງານລົງຊ່ວຍເມືອງ ແລະ ບ້ານ ເປົ້າໝາຍທົດລອງ.
6. ກວດກາ ແລະ ປັບປຸງກົນໄກການບໍລິຫານລັດດ້ານຕ່າງໆ ແລະ ບັນດາລະບຽບກົດໝາຍ ທີ່ກ່ຽວຂ້ອງກັບຂະແໜງການຕົນ ໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວການປູກ, ການລ້ຽງ ຂອງປະຊາຊົນ ກໍຄືການດຳເນີນທຸລະກິດ ກະສິກາ ແລະ ປ່າໄມ້ ຂອງຜູ້ປະກອບການ.

3.2 ເນື້ອໃນ ແລະ ຄາດໝາຍ ແຂວງເປັນຫົວໜ່ວຍຍຸດທະສາດ ດ້ານກະສິະກຳ ແລະ ປ່າໄມ້

1. ການຈັດຕັ້ງ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໄດ້ຮັບການປັບປຸງໃຫ້ກະທັດຮັດ, ສອດຄ່ອງເໝາະສົມ ແລະ ມີຈຳນວນພະນັກງານວິຊາການພຽງພໍຂັ້ນພື້ນຖານ ສາມາດເຄື່ອນໄຫວຕາມພາລະບົດບາດ ຂອງຕົນຢ່າງມີປະສິດທິຜົນ, ສາມາດເປັນເສນາທິການ ໃຫ້ແຂວງ ແລະ ກະຊວງ ໃນຖານະເປັນອົງການ ຄຸ້ມຄອງມະຫາພາກຂັ້ນທ້ອງຖິ່ນ ໃນວຽກກະສິກຳ ແລະ ປ່າໄມ້.
2. ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ສາມາດຜັນຂະຫຍາຍແນວທາງ, ແຜນນະໂຍບາຍ ຂອງພັກ, ແຜນຍຸດທະສາດພັດທະນາກະສິກຳ, ຍຸດທະສາດພັດທະນາປ່າໄມ້ ເປັນແຜນຍຸດທະສາດ, ແຜນງານ, ໂຄງການພັດທະນາກະສິກຳ ແລະ ປ່າໄມ້ ຂອງແຂວງໂດຍສອດຄ່ອງກັບຈຸດພິເສດ ແລະ ທ່າແຮງດ້ານກະສິກຳ ແລະ ປ່າໄມ້ຂອງທ້ອງຖິ່ນ ທັງເຊື່ອມໂຍງກັບຂະແໜງການທີ່ກ່ຽວຂ້ອງ ແລະ ຈັດຕັ້ງປະຕິບັດເປັນຢ່າງດີ.

3. ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ມີຄວາມສາມາດໃນການປະຕິບັດການພົວພັນຮ່ວມມື ກັບບັນດາແຂວງໃກ້ຄຽງ ເພື່ອດຳເນີນການສົ່ງເສີມ, ດູດດຶງເອົາການຮ່ວມມື, ການລົງທຶນ ດ້ານກະສິກຳ ແລະ ປ່າໄມ້ ຈາກບັນດາແຂວງຕິດຈອດ ຂອງປະເທດໃກ້ຄຽງ.
4. ຢູ່ແຂວງ, ນະຄອນຫຼວງ ມີພື້ນຖານໂຄງລ່າງ ແລະ ວັດຖຸອຸປະກອນຮັບໃຊ້ ດ້ານກະສິກຳ ແລະ ປ່າໄມ້ ເຊັ່ນ: ລະບົບຊົນລະປະທານ, ອ່າງເກັບນ້ຳ, ສູນ, ສະຖານີ, ຫ້ອງວິໄຈພະຍາດພືດ-ສັດ, ຫ້ອງວິໄຈດິນ.

### 3.3 ເນື້ອໃນ ແລະ ຄາດໝາຍ ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ດ້ານກະສິກຳ ແລະ ປ່າໄມ້

1. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີຄວາມເຂັ້ມແຂງດ້ານການຈັດຕັ້ງ, ກົງຈັກປະກອບດ້ວຍບັນດາໜ່ວຍງານ ທີ່ໄດ້ກຳນົດຢູ່ໃນພາລະບົດບາດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ມີບຸກຄະລາກອນຄົບຖ້ວນ ຕາມການ ກຳນົດຕຳແໜ່ງງານ. ມີແບບແຜນວິທີເຮັດວຽກ ແລະ ການຊີ້ນຳ-ນຳພາ ສາມາດເປັນເສນາທິການ ໃຫ້ອົງການປົກຄອງທ້ອງຖິ່ນ ໃນປະຕິບັດວຽກງານກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສາມາດຫັນແຜນຍຸດທະສາດດ້ານກະສິກຳ ແລະ ປ່າໄມ້ຂອງແຂວງ ມາເປັນແຜນງານ, ແຜນການ, ໂຄງການ ລະອຽດຂອງເມືອງ, ມີງົບປະມານ ແລະ ບຸກຄະລາກອນ ຈັດຕັ້ງປະຕິບັດ ເພື່ອອຳນວຍຄວາມສະດວກ ໃຫ້ການຜະລິດກະສິກຳ ແລະ ປ່າໄມ້ ຂະຫຍາຍຕົວ; ຂະບວນການສົ່ງເສີມການຜະລິດເປັນສິນຄ້າ ໄດ້ຮັບການຈັດຕັ້ງປະຕິບັດ ຢູ່ບ້ານເປົ້າໝາຍ ໂດຍມີເປົ້າໝາຍ ແລະ ຄາດໝາຍ ໃນແຕ່ລະດ້ານ.
3. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີຄວາມເຂັ້ມແຂງໃນການຊຸກຍູ້ການນຳໃຊ້ແນວພັນ, ເຕັກນິກ ແລະ ວິທະຍາການໃໝ່ ເຂົ້າໃນການຜະລິດ ຕິດພັນກັບການສ້າງ ຄອບຄົວ ຕົວແບບ ແລະ ການປຸງແຕ່ງຜົນຜະລິດກະສິກຳ ຢ່າງເໝາະສົມ; ຮັບປະກັນໄດ້ຄວາມໝັ້ນທ່ຽງດ້ານສະບຽງອາຫານ ແລະ ສິນຄ້າ ຢູ່ເມືອງ. ຈຸງານປ່າໄມ້ເຂດມີຄວາມສາມາດພຽງພໍ ໃນການພັດທະນາປ່າໄມ້ ແລະ ຊ່ວຍປ່າໄມ້ບ້ານ ໃນການຈັດສັນ, ຄຸ້ມຄອງເຂດປ່າໄມ້.
4. ເມືອງ ມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ເພື່ອຜະລິດ ແລະ ບໍລິການດ້ານແນວພັນພືດ ແລະ ສັດ, ສັດຕະວະແພດ ແລະ ເປັນບ່ອນຝຶກອົບຮົມດ້ານວິຊາການ, ການເຮັດສາທິດ, ຖ່າຍທອດເຕັກນິກ, ໃຫ້ຄຳປຶກສາ, ເຜີຍແຜ່ຜົນສຳເລັດ ແລະ ບົດຮຽນຕົວຈິງ ດ້ານວິຊາການ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການ.

### 3.4 ເນື້ອໃນ ແລະ ຄາດໝາຍບ້ານ ເປັນຫົວໜ່ວຍພັດທະນາດ້ານກະສິກຳ ແລະ ປ່າໄມ້

1. ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ມີການຈັດຕັ້ງທີ່ເຂັ້ມແຂງ ສາມາດເຄື່ອນໄຫວໄດ້ຕາມພາລະບົດບາດ, ສາມາດຊ່ວຍນາຍບ້ານ ໃນການພັດທະນາ ແລະ ຄຸ້ມຄອງວຽກກະສິກຳ ແລະ ປ່າໄມ້ ຢູ່ຂັ້ນບ້ານ.
2. ບ້ານສຳເລັດການວາງແຜນນຳໃຊ້ທີ່ດິນຂອງບ້ານ, ສຳເລັດການມອບດິນ-ມອບປ່າ ໃຫ້ປະຊາຊົນຄຸ້ມຄອງນຳໃຊ້.
3. ບ້ານມີໂຄງການຈຸດສຸມຕາມທ່າແຮງດ້ານການຜະລິດສິນຄ້າກະສິກຳຂອງບ້ານ; ມີໂຄງການຜະລິດສິນຄ້າກະສິກຳ ຫຼື ປ່າໄມ້ ຢ່າງໜ້ອຍໜຶ່ງໂຄງການ ທີ່ຕິດພັນກັບການຜະລິດສ້າງລາຍຮັບ ໃຫ້ແກ່ຄອບຄົວ.
4. ບ້ານມີແຜນພັດທະນາປ່າໄມ້ ແລະ ມີຄະນະກຳມະການປ່າໄມ້.
5. ຊາວກະສິກອນ ໄດ້ນຳໃຊ້ແນວພັນປັບປຸງ, ເຕັກນິກ ແລະ ວິທະຍາການໃໝ່ ເຂົ້າໃນການຜະລິດ, ຮັບປະກັນໄດ້ຄວາມໝັ້ນທ່ຽງດ້ານສະບຽງອາຫານ ແລະ ສິນຄ້າຂອງບ້ານ.
6. ບ້ານມີພະນັກງານວິຊາການຢ່າງໜ້ອຍ 1-2 ຄົນ ຮັບຜິດຊອບໂຄງການ ແລະ ປະຈຳການຢູ່ບ້ານ ເພື່ອນຳພາປະຊາຊົນເຮັດຕົວຈິງ, ພ້ອມທັງເຜີຍແຜ່ແນະນຳຄວາມຮູ້ກ່ຽວກັບການປູກຝັງ, ລ້ຽງສັດ, ການກັນພະຍາດສັດ ແລະ ປາບສັດຕູພືດ, ການຄຸ້ມຄອງຊົນລະປະທານ ໃຫ້ແກ່ຊາວກະສິກອນ ເພື່ອໃຫ້ເຂົ້າເຈົ້າ ມີເງື່ອນໄຂຍົກສູງສະມັດຕະພາບການຜະລິດຂອງຕົນ ແລະ ຕ້ອງສ້າງຕົວແບບພະນັກງານຂັ້ນບ້ານ.
7. ບ້ານມີສູນ ຫຼື ມີຈຸດບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ປະຈຳຢູ່ບ້ານ ທັງເປັນບ່ອນຝຶກອົບຮົມຊາວກະສິກອນຈາກຊ່ຽວຊານຂອງກະຊວງ, ແຂວງ, ເມືອງ.

## 4. ໜ້າທີ່ ແລະ ຂອບເຂດສິດ ຂອງກະຊວງ (ກົມ, ສະຖາບັນ, ຫ້ອງການ), ພະແນກກປແຂວງ, ຫ້ອງການກປເມືອງ

1. ໃຫ້ບັນດາກົມ, ສະຖາບັນ, ຫ້ອງການ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກວດກາຄືນບັນດານິຕິກຳ ແລະ ກົນໄກ ທີ່ມີຄວາມຈຳເປັນຕ້ອງໄດ້ດັດແກ້ ເພື່ອອຳນວຍເງື່ອນໄຂ

ໃຫ້ແກ່ການເຮັດທົດລອງ 3 ສ້າງ. ພ້ອມກັນນັ້ນ ກໍ່ຄົ້ນຄວ້າສ້າງນິຕິກຳ, ລະບຽບການ, ກຳນົດໝາຍເຕັກນິກ ແລະ ກົນໄກອັນໃໝ່ອອກເພີ່ມເຕີມ ສຳລັບຄຸ້ມຄອງຄຸ້ມຄອງດ້ານການປູກຝັງ, ລ້ຽງສັດ, ປ່າໄມ້, ຊົນລະປະທານ ເພື່ອໃຫ້ການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວດຳເນີນໄປຢ່າງຄ່ອງແຄ້ວ.

2. ໃຫ້ບັນດາກົມ, ສະຖາບັນ, ຫ້ອງການ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກວດກາ ແລະ ປັບປຸງກົນໄກການບໍລິຫານລັດດ້ານຕ່າງໆ ແລະ ບັນດາລະບຽບກົດໝາຍ ທີ່ກ່ຽວຂ້ອງກັບຂະແໜງການຕົນ ໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການທຳມາຫາກິນ ຂອງປະຊາຊົນ ກໍຄືການດຳເນີນທຸລະກິດ, ການຜະລິດ, ການຄ້າ ແລະ ການບໍລິການ ຂອງຜູ້ປະກອບກິດຈະການ-ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ,

3. ໃຫ້ບັນດາກົມ, ສະຖາບັນ, ຫ້ອງການ ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ປຶກສາຫາລື ແລະ ເປັນເອກະພາບກັນ ເປັນລາຍລັກອັກສອນ ກ່ຽວກັບການແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ, ຜົນປະໂຫຍດ ໂດຍກຳນົດໃຫ້ໄດ້ວ່າ ວຽກອັນໃດ, ຂະໜາດໃດ ທີ່ແຂວງ ແລະ ເມືອງ ມີສິດຕົກລົງອະນຸມັດ ຫຼື ມີສິດແກ້ໄຂ ໂດຍບໍ່ຕ້ອງຂໍຄຳເຫັນລັດຖະບານ ຫຼືກະຊວງ ໂດຍຕິດພັນກັບການແບ່ງຄົນ, ງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະ ທີ່ຈຳເປັນ. ວຽກງານ ຫຼື ໂຄງການໃດຫຍຸ້ງຍາກສັບສົນຫຼາຍ, ຮຽກຮ້ອງເຕັກນິກວິທະຍາການສູງ ທ້ອງຖິ່ນຍັງບໍ່ສາມາດເຮັດໄດ້ແມ່ນໃຫ້ກະຊວງ (ກົມ, ສະຖາບັນ) ເຮັດໂດຍກົງ, ວຽກງານໃດທ້ອງຖິ່ນເຮັດໄດ້ດີ ມີປະສິດທິຜົນຫຼາຍກວ່າ ແມ່ນມອບໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດ.

4. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫລວງ ຈົ່ງຮີບຮ້ອນເປັນເຈົ້າການ ປະສານສົມທົບກັບບັນດາກົມ ແລະ ສະຖາບັນ ແລະ ຊີ້ນຳຢ່າງແທດເຖິງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ອອກຂໍ້ຕົກລົງແຕ່ງຕັ້ງ ພະນັກງານວິຊາການສະເພາະດ້ານ ຜູ້ທີ່ມີປະສົບການ ລົງໄປປະຈຳ 1-2 ຄົນຕໍ່ບ້ານເປົ້າໝາຍ ເຮັດທົດລອງ ເພື່ອຊຸກຍູ້ນຳພານາຍບ້ານສ້າງແຜນດຳເນີນງານ ພັດທະນາກະສິກຳ ແລະ ປ່າໄມ້ ຂັ້ນບ້ານຕາມທ່າແຮງຕົວຈິງໃນການຜະລິດກະສິກຳ ແລະ ປ່າໄມ້ ປຸງແຕ່ງເປັນສິນຄ້າ ໂດຍກຳນົດເນື້ອໃນຄາດໝາຍທີ່ຈະສູ້ຊົນ ແລະ ຕົວຊີ້ວັດ ຄາດຄະເນບັນດາຄອບຄົວຈະຫລຸດພົ້ນຄວາມທຸກຍາກ ໃນບັນດາບ້ານທົດລອງ ພາຍຫລັງຫັນເປັນໂຄງການລະອຽດ.

4.1 ໜ້າທີ່ ແລະ ຂອບເຂດສິດ ຂອງກະຊວງ (ບັນດາກົມ, ສະຖາບັນ, ຫ້ອງການ)

1. ໃຫ້ກົມ, ສະຖາບັນ, ຫ້ອງການ:
   - ຄົ້ນຄວ້າຜັນຂະຫຍາຍແນວທາງ, ມະຕິຂອງພັກ ເປັນຍຸດທະສາດພັດທະນາກະສິກຳ ໃນນີ້:
     + ໃຫ້ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ສົມທົບກັບກົມແຜນການ, ຫ້ອງການກະຊວງ ເປັນໃຈກາງໃນການສັງລວມ ແລະ ຮ່າງແຜນຍຸດທະສາດພັດທະນາກະສິກຳ ຮອດປີ 2020.
     + ໃຫ້ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ຄົ້ນຄວ້າຜັນຂະຫຍາຍເປັນແຜນງານຄ້ຳປະກັນສະບຽງອາຫານ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ ຄົ້ນຄວ້າຜັນຂະຫຍາຍເປັນແຜນງານຜະລິດສິນຄ້າ, ກົມປ່າໄມ້ ຄົ້ນຄວ້າຫັນຍຸດທະສາດພັດທະນາປ່າໄມ້ ເປັນແຜນງານປ່າໄມ້.
     + ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ສ້າງແຜນດຳເນີນງານພັດທະນາກະສິກຳ ແລະ ປ່າໄມ້ ຢູ່ບ້ານເປົ້າໝາຍທົດລອງ ແລະ ຫັນເປັນໂຄງການພັດທະນາໃຫ້ແທດເໝາະກັບຈຸດພິເສດ, ທ່າແຮງດ້ານຕ່າງໆ ແລະ ຄວາມສາມາດບົ່ມຊ້ອນ ຕົວຈິງດ້ານກະສິກຳ ແລະ ປ່າໄມ້ ຂອງທ້ອງຖິ່ນ.

2. ໃຫ້ຫ້ອງການກະຊວງ:
   – ສົມທົບກັບບັນດາກົມ, ສະຖາບັນ ສ້າງ ແລະ ປັບປຸງ, ອອກ ກົດໝາຍ, ນະໂຍບາຍ ແລະ ລະບຽບການທີ່ຈຳເປັນສຳລັບຄຸ້ມຄອງຂະແໜງການ. ພ້ອມກັນນັ້ນ ກໍແກ້ໄຂປັບປຸງກົນໄກ ແລະ ລະບຽບການຕ່າງໆ ທີ່ຍັງກົດໜ່ວງ ອັດຕັນ ໃຫ້ຕົກໄປ.

- ສຸມໃສ່ຊ່ວຍຍູ້ໜູນຕິດຕາມກວດກາການສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດ ກົດໝາຍ, ນະໂຍບາຍ ແລະ ວຽກງານຕ່າງໆ ເປັນຕົ້ນແມ່ນເມືອງເປົ້າໝາຍເຮັດທົດລອງ ໃຫ້ດຳເນີນໄປຢ່າງຖືກຕ້ອງ ແລະ ໄດ້ຮັບຜົນດີ.

3. ໃຫ້ກົມຈັດຕັ້ງ ແລະ ພະນັກງານ:
   - ກວດກາຄືນພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
   - ຄົ້ນຄວ້າ, ສະເໜີກົງຈັກການຈັດຕັ້ງ, ຕຳແໜ່ງງານ, ມາດຕະຖານ ຂອງຕຳແໜ່ງງານ ພ້ອມທັງກຳນົດຈຳນວນພະນັກງານ-ລັດຖະກອນ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງທົດລອງ ເພື່ອເປັນບ່ອນອີງ ໃຫ້ຂັ້ນແຂວງ ແລະ ເມືອງ ໃນການຄົ້ນຄວ້າສ້າງກົງຈັກ ແລະ ບັນຈຸສັບຊ້ອນພະນັກງານ-ລັດຖະກອນຂອງຕົນຄືນໃໝ່.
   - ຄົ້ນຄວ້າ ແລະ ສະເໜີບັນຈຸພະນັກງານ-ລັດຖະກອນ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຢ່າງເໝາະສົມ; ສຳລັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ 51 ເມືອງທົດລອງ ແລະ 105 ບ້ານ ໃຫ້ເອົາໃຈໃສ່ບັນຈຸຄົບຖ້ວນຕາມການກຳນົດຂອງຕຳແໜ່ງງານ; ຫັນເອົາພະນັກງານລົງສູ່ສູນບໍລິການເຕັກນິກຂັ້ນເມືອງ ແລະ ສະຖານີບໍລິການຂັ້ນບ້ານໃຫ້ຄົບຕາມຄວາມຕ້ອງການ; ຫັນເອົາພະນັກງານລົງໄປຊ່ວຍທາງດ້ານການວາງແຜນເຕັກນິກຂັ້ນບ້ານສຳລັບບ້ານທົດລອງ ບ້ານລະ 2 ຄົນ, ພ້ອມກັນນັ້ນ, ຕິດຕາມກວດກາ ການກໍ່ສ້າງພະນັກງານກະສິກຳ ແລະ ປ່າໄມ້ຂັ້ນບ້ານ 3-5 ຄົນ ເພື່ອນຳພາປະຊາຊົນເຮັດການຜະລິດຢູ່ຂັ້ນບ້ານ.
   - ປະສານສົມທົບ ແລະ ປະກອບຄຳເຫັນ ໃຫ້ຂັ້ນແຂວງ, ຂັ້ນເມືອງ ກ່ຽວກັບມາດຕະຖານ, ເງື່ອນໄຂ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ທາງວິຊາການ ກ່ອນທີ່ນະຄອນຫຼວງ, ແຂວງ ແລະ ເມືອງ ຈະມີການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຫຼືປະຕິບັດວິໄນ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
   - ສຸມໃສ່ຂຶ້ນແຜນກໍ່ສ້າງ ແລະ ພັດທະນາ ພະນັກງານ-ລັດຖະກອນ ລວມທັງຝຶກອົບຮົມ ຍົກລະດັບ-ຢູ່ຕາມບັນດາສະຖານີບໍລິການກະສິກຳ ແລະ ປ່າໄມ້ ຢູ່ບ້ານເປົ້າໝາຍເຮັດທົດລອງ ໃຫ້ສາມາດຕອບສະໜອງຕາມຄວາມຕ້ອງການຂອງການພັດທະນາຕາມຄຳສັ່ງເລກທີ 16/ນຍ.

4. ໃຫ້ກົມກວດກາ:
   - ຕິດຕາມ, ກວດກາການເຄື່ອນໄຫວຊີ້ນຳນຳພາຂອງຄະນະ 3 ສ້າງ ແຕ່ສູນກາງ (ກະຊວງ) ລົງຮອດທ້ອງຖິ່ນ ໂດຍສະເພາະແມ່ນຜູ້ທີ່ຖືກມອບໝາຍໃຫ້ຮັບຜິດຊອບ ແລະ ຊີ້ນຳໃນແຕ່ລະໜ້າວຽກ, ເປັນຕົ້ນແມ່ນການນຳໃຊ້ງົບປະມານແຕ່ລະໂຄງການ, ແຜນງານ ເຂົ້າໃນແຕ່ລະວຽກ ພ້ອມທັງຜົນໄດ້ຮັບແຕ່ລະໄລຍ ລວມທັງໂຄງການກູ້ຢືມ ແລະ ຊ່ວຍເຫຼືອຂອງຕ່າງປະເທດ.
   - ຊີ້ນຳຕິດຕາມກວດກາ ແລະ ປະເມີນຜົນການເຄື່ອນໄຫວວຽກງານຂອງຫົວໜ້າ ແລະ ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫລວງ ແລະ ຫົວໜ້າ ແລະ ຮອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເປົ້າໝາຍເຮັດທົດລອງ ໃນການປະຕິບັດບັນດາລະບຽບການຕ່າງໆ.

5. ໃຫ້ກົມແຜນການ ແລະ ການຮ່ວມມື:
   - ເປັນໃຈກາງສົມທົບກັບບັນດາກົມ, ສະຖາບັນ, ຫ້ອງການ ສ້າງແຜນການທົດລອງ ແລະ ຂຶ້ນງົບປະມານ 2012-2013 ຈັດຕັ້ງປະຕິບັດ ພ້ອມທັງສົມທົບກັບຫ້ອງການ ຊຸກຍູ້ ແລະ ອຳນວຍເງື່ອນໄຂ ໃຫ້ແກ່ການຈັດຕັ້ງປະຕິບັດຂອງທ້ອງຖິ່ນຢ່າງຕັ້ງໜ້າ.
   - ແບ່ງໜ້າທີ່ຄວາມຮັບຜິດຊອບທາງດ້ານການຄຸ້ມຄອງໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງຕ່າງປະເທດ ແລະ ເອກະຊົນພາຍໃນປະເທດ ທີ່ສູນກາງເປັນຜູ້ອະນຸມັດ; ການຄຸ້ມຄອງໂຄງການຊ່ວຍເຫຼືອ, ກູ້ຢືມຂອງສາກົນ, ອົງການບໍ່ສັງກັດລັດຖະບານ ຕາມບົດແນະນຳ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2233/ຜທ, ລົງວັນທີ 22 ສິງຫາ 2012.

- ມອບ-ໂອນ ໂຄງການຊ່ວຍເຫຼືອຕ່າງປະເທດ ຂອງບັນດາກົມ, ສະຖາບັນ ໃຫ້ທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ໂດຍສະເພາະ ສ້າງຄວາມເຂັ້ມແຂງໃຫ້ແກ່ເມືອງ ແລະ ກຸ່ມບ້ານ.
- ສ້າງ, ຄຸ້ມຄອງ, ປັບປຸງ ວຽກງານແຜນການ, ຂະຫຍາຍລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ, ລະບົບວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ (IT) ຈາກກະຊວງ-ພະແນກກະສິກຳ ແລະ ປ່າໄມ້ແຂວງ-ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ-ບ້ານ.

6. ໃຫ້ກົມປູກຝັງ:
- ອອກຂໍ້ກຳນົດເງື່ອນໄຂ ການກວດກາຕາໜ່າງກັກກັນສັດ ແລະ ສັດຕູພືດ ກ່ອນການນຳເຂົ້າ-ສົ່ງອອກເມືອງເປົ້າໝາຍເຮັດທົດລອງ ພ້ອມທັງສະໜອງຂໍ້ມູນຂ່າວສານດ້ານການຕະຫລາດ ນຳເຂົ້າສົ່ງອອກ ພືດເສດຖະກິດ ປົກປ້ອງຄວາມເປັນທຳ ໃນການຄ້າຂາຍ ເພື່ອເປັນການກະຕຸ້ນການຜະລິດໃຫ້ໄດ້ທັງປະລິມານ, ກວດກາຄຸນນະພາບ ແລະ ການບໍລິການໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ.
- ສົມທົບກັບກົມຊົນລະປະທານ ໃນການສະໜອງນ້ຳລະດູແລ້ງ 2012-2013 ແລະ ລະດູຝົນ 2013 ໃຫ້ບັນລຸຕາມແຜນການ.
- ຕິດຕາມກວດກາຊຸກຍູ້ ການສະໜອງທຶນໃຫ້ຜູ້ປະກອບການ ເກັບຊື້ຜະລິດແບວພັນເຂົ້າໃຫ້ທົ່ວເຖິງຮາກຖານຕົວຈິງເພື່ອຜົນປະໂຫຍດຂອງຊາວກະສິກອນ ນັບທັງບ້ານພັດທະນາ ເປົ້າໝາຍເຮັດທົດລອງ.

7. ໃຫ້ກົມລ້ຽງສັດ ແລະ ການປະມົງ:
- ສົມທົບກັບບັນດາກົມ ເພື່ອຊ່ວຍແຂວງຫັນຍຸດທະສາດພັດທະນາກະສິກຳ ເປັນຍຸດທະສາດຂອງແຂວງ, ຊ່ວຍເມືອງຂຽນແຜນການຮອບດ້ານ ແລະ ລົງຊ່ວຍບ້ານສ້າງແຜນເຄື່ອນໄຫວວຽກຂອງບ້ານ.
- ສົມທົບກັບສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ ປັບປຸງຫຼັກສູດການຝຶກອົບຮົມການລ້ຽງສັດ, ລ້ຽງປາ ແລະ ການຮັກສາສຸຂະພາບສັດ.
- ສົມທົບກັບພາກສ່ວນກ່ຽວ ເພື່ອເຮັດທົດລອງການພັດທະນາຕາໜ່າງບໍລິການດ້ານເຕັກນິກ ການລ້ຽງສັດ, ການລ້ຽງປາ, ການຮັກສາສຸຂະພາບສັດ ຂັ້ນເມືອງ.
- ກວດກາຄືນບັນດາໂຄງການ ທີ່ກົມຮັບຜິດຊອບ ແລະ ມອບໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດຢູ່ບ່ອນທີ່ມີເງື່ອນໄຂ.
- ສ້າງລະບຽບການສະເພາະໃນການປ້ອງກັນພະຍາດ ໃຫ້ບ້ານເປົ້າໝາຍທົດລອງປອດພະຍາດສັດ ພ້ອມທັງຂຶ້ນທະບຽນພົມສັດ.
- ຝຶກອົບຮົມອາສາສະໝັກສັດຕະວະແພດບ້ານ ກ່ຽວກັບການເຝົ້າລະວັງ ແລະ ສັກຢາກັນພະຍາດ, ການຄວບຄຸມ ແລະ ການສ້າງເຂດກັນຊົນ ການລະບາດ ພ້ອມທັງສຳຫຼວດ ແລະ ການປະຕິບັດລະບຽບການຄຸ້ມຄອງເຄື່ອນຍ້າຍສັດ.
- ປັບປຸງກົນໄກການລາຍງານຂ່າວສານ ດ້ານພະຍາດສັດ ຢູ່ບ້ານເປົ້າໝາຍເຮັດທົດລອງ ຫາເມືອງ, ແຂວງ ແລະ ກະຊວງ ຢ່າງເປັນລະບົບ ແລະ ທັນການ.

8. ໃຫ້ກົມຊົນລະປະທານ:
- ຄົ້ນຄວ້າອອກນະໂຍບາຍສົ່ງເສີມເປັນພິເສດ ສະເພາະບັນຊີລາຍຊື່ໂຄງການ ນຳໃຊ້ຈັກສູບນ້ຳ ແລະ ໄຫລເຂົ້າເອງ ຢູ່ໃນບ້ານເປົ້າໝາຍເຮັດທົດລອງ ໃນການສະໜອງນ້ຳຊົນລະປະທານ ສົກປີ 2012-2013.
- ຄົ້ນຄວ້າ, ປັບປຸງລະບຽບ ແລະ ເຕັກນິກການຄຸ້ມຄອງນຳໃຊ້, ສ້າງກຸ່ມ ຫຼືສະມາຄົມຜູ້ຄຸ້ມຄອງນຳໃຊ້ນ້ຳບ້ານເປົ້າໝາຍ 3 ສ້າງ, ສ້າງຕຳລາເຕັກນິກເບື້ອງຕົ້ນກ່ຽວກັບວຽກງານຊົນລະປະທານ ລົງຝຶກອົບຮົມໃຫ້ວິຊາການຂັ້ນບ້ານ, ຂັ້ນເມືອງ ເພື່ອໃຫ້ເຂົາເຈົ້າສາມາດສຶກສາ, ສຳຫຼວດ, ອອກແບບ ແລະ ຄຸ້ມຄອງການກໍ່ສ້າງ ບັນດາໂຄງການທີ່ຢູ່ຂັ້ນຄຸ້ມຄອງຂອງຕົນ.
- ກວດກາຊຸກຍູ້ຕິດຕາມ ການສະຫລຸບປະເມີນຜົນ ແລະ ຖອດຖອນບົດຮຽນການນຳໃຊ້ງົບປະມານ ຟື້ນຟູສ້ອມແປງລະບົບຊົນລະປະທານ ທີ່ຖືກຜົນກະທົບຈາກໄພທຳມະຊາດລະດູຝົນປີ 2011 ເພື່ອຮັບປະກັນການສະໜອງນ້ຳການຜະລິດລະດູແລ້ງ 2012-2013 ແລະ ລະດູຝົນ 2013 ຕາມແຜນການ.

- ລົງໄປເກັບກໍາຂໍ້ມູນ ໂຄງການຊົນລະປະທານ ທີ່ມີແລ້ວ ຢູ່ບ້ານເປົ້າໝາຍເຮັດທົດລອງ ເພື່ອຊຸກຍູ້ໃຫ້ເມືອງຂຶ້ນແຜນງົບປະມານ, ສ້ອມແປງໂຄງການທີ່ເປ່ເພ, ກໍ່ສ້າງສ້ອມແປງ ແລະ ສຶກສາສໍາຫຼວດອອກແບບ ໂຄງການໃໝ່ທີ່ມີຄວາມຈໍາເປັນ ໃນຂະບວນເຮັດທົດລອງ 3 ສ້າງ ແລະ ເອົາໃຈໃສ່ຊົນລະປະທານທໍ່ປ່ອງຊົນ ຝາຍກວາຍຫີນ, ເຈາະສ້າງບາດານນໍາໃຊ້ນໍ້າໃຕ້ດິນ ເພື່ອປູກພືດ, ປູກຫຍ້າລ້ຽງສັດ ເປັນສິນຄ້າ.

9. ໃຫ້ກົມປ່າໄມ້:

- ປະສານສົມທົບກັບພະແນກ ກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫລວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ເປົ້າໝາຍເຮັດທົດລອງ ຈັດຕັ້ງໜ່ວຍງານປ່າໄມ້ ແລະ ຈຸງານປ່າໄມ້ເຂດ ພ້ອມທັງດໍາເນີນການສໍາຫຼວດ, ວາງແຜນການຄຸ້ມຄອງປ່າຜະລິດ, ປ່າໄມ້ບ້ານ, ການປູກໄມ້ອຸດສະຫະກໍາ ແລະ ແຜນການນໍາໃຊ້ ເຄື່ອງປ່າຂອງດົງ ພ້ອມດ້ວຍການປຸງແຕ່ງເປັນສິນຄ້າ ໃນບ້ານເປົ້າໝາຍ.
- ສົມທົບກັບທ້ອງຖິ່ນດໍາເນີນການສໍາຫຼວດ, ກໍານົດຈັດສັນ ທີ່ດິນປ່າໄມ້.
- ສົມທົບກົມສົ່ງເສີມກະສິກໍາ ແລະ ສະຫະກອນ ດໍາເນີນການມອບດິນ-ມອບປ່າ ພາຍຫຼັງສໍາເລັດການ ກໍານົດຈັດສັນແບ່ງເຂດດິນປ່າໄມ້.

10. ໃຫ້ກົມກວດກາປ່າໄມ້:

- ຕິດຕາມ, ກວດກາການທໍາລາຍປ່າໄມ້ ລວມທັງວາງມາດຕະການຕ້ານ ແລະ ສະກັດກັ້ນການລັກລອບຕັດໄມ້, ການຊື້-ຂາຍ, ການເຄື່ອນຍ້າຍ ເຄື່ອງປ່າຂອງດົງ, ຊົວະນາໆພັນ, ສັດນໍ້າ, ສັດປ່າ ທີ່ຜິດກົດໝາຍ;
- ປັບປຸງລະບົບກວດກາປ່າໄມ້ ທີ່ມີຢູ່ຕາມຈຸດຫຼໍ່ແຫຼມ ແລະ ວຽກງານກວດກາປ່າໄມ້ ນັບແຕ່ການກວດກາການປະຕິບັດຂໍ້ບັງຄັບ ແລະ ເງື່ອນໄຂຕ່າງໆ ໃນການຈັດສັນປ່າໄມ້, ການກວດກາການຂຸດຄົ້ນໄມ້, ການຄຸ້ມຄອງຕິດຕາມການເຄື່ອນຍ້າຍຜະລິດຕະພົນປ່າໄມ້, ການກວດກາເພື່ອການຢັ້ງຢືນປ່າໄມ້.
- ຄົ້ນຄວ້າຈັດຕັ້ງໜ່ວຍງານກວດກາປ່າໄມ້ ຢູ່ບັນດາບ້ານເປົ້າໝາຍເຮັດທົດລອງ ແລະ ປະສານສົມທົບແໜ້ນກັບພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫລວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ, ໜ່ວຍງານກວດກາປ່າໄມ້ ຂັ້ນບ້ານ ເຂົ້າຮ່ວມ ແລະ ເປັນເຈົ້າ ການສືບຕໍ່ຍົກສູງສະຕິຄວາມຮັບຜິດຊອບ ກວດກາຄຸ້ມຄອງປ່າໄມ້, ສຶກສາອົບຮົມ ຫລື ປັບໃໝ ຕໍ່ຜູ້ລະເມີດ, ລັກລອບຕັດໄມ້ຜິດກົດໝາຍ ແລະ ມີມາດຕະການຢ່າງເໝາະສົມ.

11. ໃຫ້ກົມສົ່ງເສີມກະສິກໍາ ແລະ ສະຫະກອນ:

- ກໍານົດມາດຖານສະຖານີ ບໍລິການກະສິກໍາຂັ້ນແຂວງ, ຂັ້ນເມືອງ, ກຸ່ມບ້ານ ພ້ອມທັງຄົ້ນຄວ້າສ້າງຕັ້ງສະຖານີບໍລິການກະສິກໍາ ຢູ່ເຂດຈຸດສຸມ ທີ່ມີທ່າແຮງດ້ານການຜະລິດກະສິກໍາ ແລະ ການປຸງແຕ່ງ. ໃນນີ້ ໃຫ້ເອົາໃຈໃສ່ພິເສດ ແລະ ຈັດຕັ້ງໃຫ້ເປັນຮູບປະທໍາໂດຍໄວ ໃນເຂດບ້ານ, ເມືອງວິລະຊົນ ທີ່ເປັນຈຸດສຸມພັດທະນາ.
- ສົມທົບກັບທ້ອງຖິ່ນກໍານົດໂຄງການຈຸດສຸມ ທີ່ເປັນທ່າແຮງດ້ານການຜະລິດສິນຄ້າກະສິກໍາຂອງບ້ານທີ່ຈະສ້າງເປັນບ້ານພັດທະນາ; ຮັບປະກັນໃຫ້ແຕ່ລະບ້ານມີໂຄງການຜະລິດສິນຄ້າ ຢ່າງໜ້ອຍໜຶ່ງໂຄງການ; ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າແຕ່ງຕັ້ງພະນັກງານວິຊາການ 1-2 ຄົນ ຮັບຜິດຊອບໂຄງການນັ້ນ ແລະ ໃຫ້ປະຈໍາການຢູ່ຮາກຖານ.
- ຊຸກຍູ້ສົ່ງເສີມໃຫ້ຊາວກະສິກອນໄດ້ເຂົ້າເຖິງແຫຼ່ງທຶນການຜະລິດ, ປັບປຸງກໍາລັງການຜະລິດ, ການສ້າງຕັ້ງກຸ່ມການຜະລິດ ຢູ່ຂັ້ນບ້ານ ຕາມການແບ່ງເຂດທີ່ດິນກະສິກໍາທີ່ໄດ້ກໍານົດໄວ້ ແລະ ເອົາໃຈໃສ່ສົ່ງເສີມການປູກໄມ້ອຸດສະຫະກໍາໃສ່ໄຮ່ເຂົ້າ, ສາລີ, ໝາກເດືອຍ ໃຫ້ກາຍເປັນປ່າ ປຸງແຕ່ງເປັນສິນຄ້າ.
- ຝຶກອົບຮົມສ້າງວິຊາການໃຫ້ບັນດາສູນບໍລິການ, ຝຶກອົບຮົມສ້າງວິຊາການກັບທີ່ 3-5 ຄົນ ໃນເຂດເມືອງ ແລະ ບ້ານຈຸດສຸມ ເພື່ອນໍາພາປະຊາຊົນເຮັດການຜະລິດຢູ່ຂັ້ນບ້ານ. ພ້ອມດ້ວຍ ຊຸກຍູ້ໃຫ້ຊາວກະສິກອນ ກ້າຫານກູ້ຢືມເງິນ ຈາກທະນາຄານດອກເບ້ຍຕໍ່າ ແລະ ມີໄລຍະທີ່ຍາວ.

12. ໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາ:

- ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງທີ່ດິນກະສິກໍາ ໃຫ້ໄປຕາມແຜນຍຸດທະສາດຂອງການພັດທະນາກະສິກໍາ ແລະ ປ່າໄມ້ ຢູ່ບັນດາບ້ານເປົ້າໝາຍເຮັດທົດລອງ ໃຫ້ສົມສ່ວນ ຕາມທ່າແຮງຕົວຈິງ ຂອງການຜະລິດເປັນສິນຄ້າ ເພື່ອໃຫ້ບັນດາກຸ່ມການຜະລິດ ໄດ້ຊົມໃຊ້ຕາມແຜນດໍາເນີນງານ ພັດທະນາກະສິກໍາຂັ້ນບ້ານ ໃຫ້ໄດ້ຮັບຜົນດີ.

- ໃຫ້ກວດກາຄືນເຂດທີ່ດິນກະສິກຳ ແລະ ປ່າໄມ້ ທີ່ໄດ້ອະນຸຍາດ ໃຫ້ຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ ສຳປະທານຜ່ານມາ, ຖ້າເຫັນວ່າບ່ອນໃດມີການລ່ວງລໍ້າເອົາດິນຂອງປະຊາຊົນ ຫລື ປ່າໄມ້ຊົມ ໃຊ້ຂອງບ້ານ ກໍ່ຕ້ອງໄດ້ປະສານກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພ້ອມກັນແກ້ໄຂຢ່າງເດັດຂາດ ບົນພື້ນຖານຫລັກການທີ່ວ່າ : ໃຫ້ຊາວກະສິກອນມີສິດຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ເພື່ອຮັບປະກັນໃຫ້ເຂົາເຈົ້າມີບ່ອນເຮັດການຜະລິດເປັນຂອງຕົນເອງ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມພໍ່ຢູ່ພໍກິນໃຫ້ແຕ່ລະຄອບຄົວມີດິນປູກພືດ, ລ້ຽງສັດ ແລະ ປູກໄມ້ອຸດສະຫະກຳ ເປັນຂອງເຂົາເຈົ້າເອງ.
- ສົມທົບກັບກົມປ່າໄມ້ ແລະ ທ້ອງຖິ່ນ ດຳເນີນການສຳຫຼວດ, ກຳນົດຈັດສັນ, ແບ່ງເຂດດິນກະສິກຳ, ທີ່ດິນປ່າໄມ້.
- ສົມທົບກົມປ່າໄມ້, ກົມສົ່ງເສີມກະສິກຳ ແລະ ສະຫະກອນ ດຳເນີນການມອບດິນ-ມອບປ່າ ພາຍຫຼັງສຳເລັດການກຳນົດຈັດສັນ ແບ່ງເຂດດິນ ເພື່ອຈັດຕັ້ງກຸ່ມການຜະລິດ ຕາມທ່າແຮງຂອງບັນດາບ້ານເປົ້າໝາຍເຮັດທົດລອງ.

13. ໃຫ້ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ:
    - ສົມທົບກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຜັນຂະຫຍາຍ ແລະ ຝຶກອົບຮົມ ຜົນສຳເລັດການຄົ້ນຄວ້າທົດລອງ, ນຳໃຊ້ແນວພັນພືດ, ແນວພັນສັດ, ແນວພັນປາ ແລະ ສັດນໍ້າ ຢູ່ສູນສະຖານີ ແລະ ສູນບໍລິການເຕັກນິກ.

**4.2 ໜ້າທີ່ ແລະ ຂອບເຂດສິດ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ**

1. ສ້າງຍຸດທະສາດພັດທະນາກະສິກຳ, ຍຸດທະສາດພັດທະນາປ່າໄມ້ ຂອງທ້ອງຖິ່ນຕົນ ໂດຍໃຫ້ສອດຄ່ອງ ກັບຍຸດທະສາດ ພັດທະນາກະສິກຳ ຮອດປີ 2020, ຍຸດທະສາດພັດທະນາປ່າໄມ້ ຮອດປີ 2020 ແລະ ແຜນດຳເນີນງານພັດທະນາກະສິກຳ ແລະ ປ່າໄມ້ ສົກປີ 2012-2013 ຢູ່ບັນດາບ້ານເປົ້າໝາຍເຮັດທົດລອງ ທັງແທດເໝາະກັບຈຸດພິເສດ, ທ່າແຮງດ້ານຕ່າງໆ ແລະ ຄວາມສາມາດບົ່ມຊ້ອນ ຕົວຈິງດ້ານກະສິກຳ ແລະ ປ່າໄມ້ ຂອງແຂວງຕົນ ພ້ອມທັງສູ້ຊົນຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.
2. ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ເຊື່ອມຊຶມກົງຈັກການຈັດຕັ້ງ, ຕຳແໜ່ງງານ, ມາດຕະ ຖານ ຂອງຕຳແໜ່ງງານທີ່ກະຊວງກຳນົດໃຫ້ເລິກເຊິ່ງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
3. ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ເຮັດທົດລອງ ເພື່ອກຳໄດ້ຈຳນວນຄວາມຕ້ອງການພະນັກງານທີ່ຈຳເປັນໂດຍສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ສູ້ຊົນສະໜອງໃຫ້ໄດ້ຕາມຄວາມຕ້ອງການ.
4. ສ້າງແຜນການ ແລະ ງົບປະມານເຮັດທົດລອງ ສົກປີ 2012-2013 ຂອງຕົນໂດຍອີງໃສ່ການຫັນເປັນໂຄງການລະອຽດຂອງບັນດາບ້ານເປົ້າໝາຍເຮັດທົດລອງ ໂຄງການລົງທຶນ ແລະ ໜ້າທີ່ວິຊາສະເພາະທີ່ໄດ້ຮັບມອບໝາຍ ແລະ ຕ້ອງປະຕິບັດໂດຍກົງ ເຂົ້າໃນແຜນການ ແລະ ງົບປະມານ ເພື່ອເຄື່ອນໄຫວວຽກງານ 3 ສ້າງ ທັງຈັດຕັ້ງປະຕິບັດຢ່າງເປັນເຈົ້າການ, ມີການສະຫຼຸບ ແລະ ຖອດຖອນບົດຮຽນ ຢ່າງພາວະວິໄສ ເມື່ອສິ້ນສຸດການເຮັດທົດລອງ.
5. ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ເຮັດທົດລອງ ສ້າງແຜນການ ແລະ ງົບປະມານເຮັດທົດລອງ ສົກປີ 2012-2013 ຂອງຕົນໂດຍກວມເອົາທຸກໂຄງການລົງທຶນ ແລະ ໜ້າທີ່ວິຊາສະເພາະທີ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ຮັບມອບໝາຍ ແລະ ຕ້ອງປະຕິບັດໂດຍກົງ ເຂົ້າໃນແຜນການ ແລະ ງົບປະມານ.
6. ປະສານສົມທົບກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ ໃນການຄົ້ນຄວ້າປັບປຸງສະຖານີ ບໍລິການກະສິກຳ ແລະ ປ່າໄມ້ ເພື່ອຜະລິດ ແລະ ບໍລິການດ້ານແນວພັນພືດ ແລະ ສັດ, ສັດຕະວະແພດ ແລະ ເປັນບ່ອນຝຶກອົບຮົມດ້ານວິຊາການ, ການເຮັດສາທິດ, ຖ່າຍທອດເຕັກນິກ, ເຜີຍແຜ່ຜົນສຳເລັດ ແລະ ບົດຮຽນຕົວຈິງ ດ້ານວິຊາການ ໃຫ້ແກ່ຊາວນາ ແລະ ຜູ້ປະກອບການ ພ້ອມທັງພິມເປັນແຜ່ນພັບບົດແນະນຳການປູກ, ການລ້ຽງ, ຄຸ້ມຄອງ ຊົນລະປະທານ ແລະ ການປູກໄມ້ອຸດສະຫະກຳ ປຸງແຕ່ງເປັນສິນຄ້າ.
7. ປະສານສົມທົບກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ ຄົ້ນຄວ້າສ້າງຕັ້ງສະຖານີບໍລິການກະສິກຳ ຢູ່ເຂດຈຸດສຸມທີ່ມີທ່າແຮງດ້ານການຜະລິດກະສິກຳ ແລະ ການປຸງແຕ່ງ. ເອົາໃຈໃສ່ພິເສດ ແລະ ຈັດຕັ້ງໃຫ້ເປັນຮູບປະທຳໂດຍໄວໃນເຂດບ້ານ, ເມືອງວິລະຊົນ ທີ່ເປັນຈຸດສຸມພັດທະນາ;

8. ປະສານສົມທົບກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ ຄົ້ນຄວ້າກ່ຽວກັບໂຄງການຈຸດສຸມ ທີ່ເປັນທ່າແຮງດ້ານການຜະລິດສິນຄ້າກະສິກຳ ຂອງບ້ານທີ່ຈະສ້າງເປັນບ້ານພັດທະນາ; ຮັບປະກັນໃຫ້ແຕ່ລະບ້ານມີໂຄງການຜະລິດສິນຄ້າ ຢ່າງໜ້ອຍໜຶ່ງໂຄງການ; ຄົ້ນຄວ້າແຕ່ງຕັ້ງພະນັກງານວິຊາການ 1-2 ຄົນ ຮັບຜິດຊອບໂຄງການນັ້ນ ແລະ ໃຫ້ປະຈຳການຢູ່ຮາກຖານ.
9. ສົມທົບກັບກົມປ່າໄມ້ ຈັດຕັ້ງໜ່ວຍງານປ່າໄມ້ເມືອງ ແລະ ຈຸງານປ່າໄມ້ ພ້ອມທັງກຳນົດພາລະບົດບາດ, ສິດ, ໜ້າທີ່ຄວາມຮັບຜິດຊອບ ແລະ ລະບອບແບບແຜນວິທີເຮັດວຽກ.
10. ປະສານສົມທົບກັບສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ຄົ້ນຄວ້າ ແລະ ຂະຫຍາຍແນວພັນພືດ, ແນວພັນສັດ, ແນວພັນສັດນ້ຳ.
11. ຂຶ້ນທະບຽນຊາວນາ ຜູ້ຜະລິດແນວພັນພືດ, ຕິດຕາມກວດກາການຜະລິດ, ການສະໜອງ, ການນຳໃຊ້ ແນວພັນພືດ ທີ່ມີຄຸນນະພາບ ເພື່ອໃຫ້ທົ່ວເຖິງໃນແຕ່ລະບ້ານເປົ້າໝາຍ.
12. ຂຶ້ນທະບຽນແນວພັນພືດນຳເຂົ້າ, ສະກັດກັ້ນການນຳເຂົ້າຝຸ່ນ, ຢາປອມເສຍຄຸນ ຈາກຕ່າງປະເທດ, ສ້າງຮູບແບບການຜະລິດກະສິກຳສະອາດ: ກະສິກຳອິນຊີ, ກະສິກຳທີ່ດີ.
13. ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສ້າງແຜນການ, ແຜນງານ ພັດທະນາກະສິກຳ ແລະ ປ່າໄມ້ ແລະ ໂຄງການຍຸດຕິການຖາງປ່າເຮັດໄຮ່, ວຽກງານມອບດິນ-ມອບປ່າ, ຈັດສັນອາຊີບຄົງທີ່, ການພັດທະນາພື້ນຖານໂຄງລ່າງດ້ານກະສິກຳ ຢູ່ຂັ້ນບ້ານ, ກຸ່ມບ້ານ.
14. ຊີ້ນຳ ແລະ ອຳນວຍຄວາມສະດວກດ້ານທຶນຮອນ, ພະນັກງານ-ລັດຖະກອນ ແລະ ດ້ານອື່ນໆ ໃຫ້ແກ່ການສ້າງຈຸດສຸມ ພັດທະນາຂອງແຂວງ ແລະ ບ້ານຈຸດສຸມຕົວແບບດ້ານການພັດທະນາຂອງເມືອງ ຢ່າງເໝາະສົມ.

### 4.3 ໜ້າທີ່ ແລະ ຂອບເຂດສິດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

1. ສ້າງແຜນພັດທະນາ ກະສິກຳ ແລະ ປ່າໄມ້ ຂອງເມືອງຕົນ ໂດຍສອດຄ່ອງກັບຍຸດທະສາດພັດທະນາກະສິກຳ ຮອດ 2020 ຂອງແຂວງ, ຍຸດທະສາດພັດທະນາປ່າໄມ້ ຮອດ 2020 ຂອງແຂວງ ທັງສອດຄ່ອງກັບສະພາບຈຸດພິເສດ, ທ່າແຮງດ້ານຊັບພະຍາກອນຕ່າງໆ ແລະ ຄວາມອາດສາມາດບົ່ມຊ້ອນຕົວຈິງ ດ້ານກະສິກຳ ແລະ ປ່າໄມ້ຂອງເມືອງຕົນ.
2. ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ທົບທວນຄືນກົງຈັກ ແລະ ບຸກຄະລາກອນ ໃນໂຄງປະກອບການຈັດຕັ້ງຕົນບົນພື້ນຖານມາດຕະຖານ ຂອງຕຳແໜ່ງງານ ທີ່ກະຊວງກຳນົດໄວ້, ສະພາບຕົວຈິງ, ແລະ ຄວາມຈຳເປັນ ຂອງເມືອງ. ຖ້າມີຄວາມຈຳເປັນ ກໍຕັດສິນໃຈປັບປຸງ ແລະ ແກ້ໄຂ ໃຫ້ສອດຄ່ອງຢ່າງມີປະສິດທິຜົນ.
3. ສົມທົບກັບອົງການປົກຄອງບ້ານເປົ້າໝາຍເຮັດການທົດລອງ ເພື່ອກຳໄດ້ຈຳນວນຄວາມຕ້ອງການພະນັກງານທີ່ຈະລົງຊ່ວຍບ້ານ ໂດຍສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ສູ້ຊົນສະໜອງໃຫ້ໄດ້ຕາມຄວາມຕ້ອງການ.
4. ສ້າງແຜນການ ແລະ ງົບປະມານເຮັດທົດລອງ ສົກປີ 2012-2013 ຂອງຕົນໂດຍເອົາໂຄງການລົງທຶນ ແລະ ໜ້າທີ່ວິຊາສະເພາະທີ່ໄດ້ຮັບມອບໝາຍ ແລະ ຕ້ອງປະຕິບັດໂດຍກົງ ເຂົ້າໃນແຜນການ ແລະ ງົບປະມານ, ຈັດຕັ້ງປະຕິບັດຢ່າງເປັນເຈົ້າການ, ມີການສະຫຼຸບ ແລະ ຖອດຖອນບົດຮຽນ ຢ່າງພາວະວິໄສ ເມື່ອສິ້ນສຸດການເຮັດທົດລອງ.
5. ຊຸກຍູ້ອຳນາດການປົກຄອງບ້ານທີ່ເຮັດທົດລອງ ເພື່ອສ້າງແຜນການພັດທະນາກະສິກຳ ແລະ ປ່າໄມ້ ໃຫ້ສອດຄ່ອງ ກັບທ່າແຮງຊັບພະຍາກອນທຳມະຊາດ ໂດຍໃຫ້ຄອບຄົວຊາວກະສິກອນມີສ່ວນຮ່ວມ ເພື່ອກຳນົດຄາດໝາຍສູ້ຊົນ ແລະ ມາດຕະການຈັດຕັ້ງປະຕິບັດ, ອຳນວຍຄວາມສະດວກ ແລະ ໃຫ້ຄຳປຶກສາທາງດ້ານເຕັກນິກ ແລະ ວິຊາການດ້ານກະສິກຳ ແລະປ່າໄມ້.
6. ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຄົ້ນຄວ້າປັບປຸງສະຖານີ ບໍລິການກະສິກຳ ແລະ ປ່າໄມ້ຢູ່ຂັ້ນເມືອງ, ກຸ່ມບ້ານ, ບ້ານ ເພື່ອບໍລິການດ້ານແນວພັນພືດ ແລະ ສັດ, ສັດຕະວະແພດ ແລະ ເປັນບ່ອນຝຶກອົບຮົມດ້ານວິຊາການ, ການເຮັດສາທິດ, ຖ່າຍທອດເຕັກນິກ, ເຜີຍແຜ່ຜົນສຳເລັດ ແລະ ບົດຮຽນຕົວຈິງດ້ານວິຊາການ ໃຫ້ແກ່ຊາວນາ ແລະ ຜູ້ປະກອບການ.

7. ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຄົ້ນຄວ້າສ້າງຕັ້ງສະຖານີບໍລິການກະສິກຳ ຢູ່ເຂດຈຸດສຸມ ທີ່ມີທ່າແຮງດ້ານການຜະລິດກະສິກຳ ແລະ ການປຸງແຕ່ງ. ເອົາໃຈໃສ່ພິເສດ ແລະ ຈັດຕັ້ງໃຫ້ເປັນຮູບປະທຳໂດຍໄວ ໃນເຂດບ້ານ, ເມືອງວິລະຊົນ ທີ່ເປັນຈຸດສຸມພັດທະນາ.
8. ປະສານສົມພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ຄົ້ນຄວ້າກ່ຽວກັບໂຄງການຈຸດສຸມ ທີ່ເປັນທ່າແຮງດ້ານການຜະລິດສິນຄ້າກະສິກຳຂອງບ້ານທີ່ຈະສ້າງເປັນບ້ານພັດທະນາ; ຮັບປະກັນໃຫ້ແຕ່ລະບ້ານມີໂຄງການຜະລິດສິນຄ້າຢ່າງໜ້ອຍໜຶ່ງໂຄງການ; ຄົ້ນຄວ້າແຕ່ງຕັ້ງພະນັກງານວິຊາການ 1-2 ຄົນ ຮັບຜິດຊອບໂຄງການນັ້ນ ແລະ ໃຫ້ປະຈຳການຢູ່ຮາກຖານ ເພື່ອນຳພາປະຊາຊົນເຮັດຕົວຈິງ, ພ້ອມທັງເຜີຍແຜ່ແນະນຳຄວາມຮູ້ກ່ຽວກັບການປູກຝັງ, ລ້ຽງສັດ, ການກັນພະຍາດສັດ ແລະ ປາບສັດຕູພືດ ໃຫ້ແກ່ຊາວກະສິກອນ ເພື່ອໃຫ້ເຂົາເຈົ້າ ມີເງື່ອນໄຂຍົກສູງສະມັດຕະພາບການຜະລິດຂອງຕົນ;
9. ຊີ້ນຳ-ນຳພາບ້ານ ປັບປຸງ ແລະ ຈັດຕັ້ງໜ່ວຍງານກະສິກຳ ແລະ ປ່າໄມ້ ຂັ້ນບ້ານໃຫ້ເຂັ້ມແຂງ ສາມາດເຄື່ອນໄຫວ ຕາມພາລະບົດບາດ.

## 4.4 ໜ້າທີ່ ແລະ ຂອບເຂດສິດ ຂອງບ້ານ ແລະ ໜ່ວຍງານກະສິກຳ ແລະ ປ່າໄມ້ ບ້ານ

### ກ. ໜ້າທີ່ຂອງບ້ານ

1. ຈັດຕັ້ງ ແລະ ປັບປຸງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ໃຫ້ມີການຈັດຕັ້ງທີ່ເຂັ້ມແຂງ ສາມາດເຄື່ອນໄຫວໄດ້ຕາມພາລະບົດບາດ, ສາມາດຊ່ວຍນາຍບ້ານ ໃນການພັດທະນາ ແລະ ຄຸ້ມຄອງວຽກກະສິກຳ ແລະ ປ່າໄມ້ ຢູ່ພາຍໃນບ້ານ.
2. ຮ່ວມມືກັບສູນກາງ ແລະ ແຂວງ ວາງແຜນນຳໃຊ້ທີ່ດິນຂອງບ້ານ, ມອບດິນ-ມອບປ່າ ໃຫ້ປະຊາຊົນຄຸ້ມຄອງນຳໃຊ້.
3. ຮ່ວມກັບສູນກາງ ແລະ ແຂວງ ກຳນົດໂຄງການຈຸດສຸມທີ່ເປັນທ່າແຮງດ້ານການຜະລິດສິນຄ້າກະສິກຳຂອງບ້ານ; ໂຄງການຜະລິດສິນຄ້າກະສິກຳ ຫຼືປ່າໄມ້ ຢ່າງໜ້ອຍໜຶ່ງໂຄງການ; ພ້ອມທັງປັບປຸງກຳລັງ ການລະຜົດ, ການສ້າງຕັ້ງກຸ່ມການຜະລິດ.
4. ຮ່ວມກັບໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ເກັບກຳຂໍ້ມູນລາຍຮັບແຕ່ລະຄອບຄົວ, ຄອບຄົວຍັງບໍ່ທັນພົ້ນທຸກ, ນຳພາຊາວກະສິກອນ ຈັດຕັ້ງປະຕິບັດໂຄງການດັ່ງກ່າວ ແນໃສ່ເພື່ອໃຫ້ບ້ານມີຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ເພີ່ມຂຶ້ນ ກວມ 60% ຂຶ້ນໄປ.
5. ຮ່ວມກັບ ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ຊຸກຍູ້, ນຳພາຊາວກະສິກອນ ໃນບ້ານ ໄດ້ນຳໃຊ້ແນວພັນປັບປຸງ, ເຕັກນິກ ແລະ ວິທະຍາການໃໝ່ ເຂົ້າໃນການຜະລິດ, ຮັບປະກັນໄດ້ຄວາມໝັ້ນທ່ຽງດ້ານສະບຽງຫານໃນບ້ານ.
6. ຮ່ວມມື ກັບສູນກາງ ແລະ ແຂວງ ໃນການສ້າງສູນ ຫຼື ມີຈຸດບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ປະຈຳຢູ່ບ້ານ.

### ຂ. ໜ້າທີ່ຂອງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ

1. ສົມທົບກັບນາຍບ້ານສ້າງແຜນພັດທະນາກະສິກຳ, ແຜນພັດທະນາປ່າໄມ້ ຂອງບ້ານ ຕາມຈຸດພິເສດ, ທ່າແຮງ ແລະ ຄວາມຕ້ອງການ ຂອງບ້ານ, ກຸ່ມບ້ານ. ພ້ອມທັງຊຸກຍູ້ ແລະ ນຳພາຊາວກະສິກອນ ຜະລິດສະບຽງອາຫານ ໃຫ້ກຸ້ມກິນມີສ່ວນແຮໄວ້ ແລະ ເປັນສິນຄ້າ ດ້ວຍການນຳໃຊ້ແນວພັນໃໝ່, ເຕັກນິກການຜະລິດທີ່ເໝາະສົມ ໃຫ້ຜົນຜະລິດ ແລະ ມີປະສິດທິຜົນສູງ.
2. ສົມທົບກັບນາຍບ້ານເກັບກຳສະຖິຕິວຽກງານກະສິກຳ ແລະ ປ່າໄມ້ ຂອງບ້ານ ໂດຍສະເພາະຂອບເຂດເນື້ອທີ່ການຜະລິດ, ອຸປະກອນເຄື່ອງມືການຜະລິດ, ແຮງງານກະສິກຳຂອງບ້ານ, ສະຖິຕິສັດລ້ຽງ-ການລ້ຽງປາ ໃນແຕ່ລະໄລຍະ.
3. ຊີ້ນຳ-ນຳພາ, ຕິດຕາມການປະຕິບັດວຽກງານ ຂອງສັດຕະວະແພດບ້ານ, ປ່າໄມ້ບ້ານ, ກອງທຶນຢາສັດ, ກອງທຶນສັດ, ກອງທຶນພັດທະນາບ້ານ ທີ່ໂຄງການຊ່ວຍເຫຼືອ ມອບໃຫ້ບ້ານ.
4. ສົມທົບກັບນາຍບ້ານ ປຸກລະດົມນຳພາປະຊາຊົນ ປົກປັກຮັກສາຜົນຜະລິດ, ຕິດຕາມການລະບາດຂອງພະຍາດສັດ, ສັດຕູພືດ, ປົກປັກຮັກສາຊັບພະຍາກອນທຳມະຊາດ, ຄຸ້ມຄອງຮັກສາ ພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ຮັບໃຊ້ການຜະລິດ (ອ່າງເກັບນ້ຳ, ຝາຍ, ຄອງເໝືອງ, ຫ້ວງານ, ຈັກສູບນ້ຳ, ນຳໃຊ້ນ້ຳໃຕ້ດິນ)

5. ຕິດຕາມ, ເກັບກຳສະພາບການຜະລິດກະສິກຳ ແລະ ປ່າໄມ້ ພ້ອມຂໍ້ມູນສະຖິຕິ ຂອງບ້ານສະຫຼຸບປະຈຳເດືອນ ເພື່ອລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຊາບປົກກະຕິ.

## 9. ບາດກ້າວ ແລະ ມາດຕະການຈັດຕັ້ງປະຕິບັດ

### 9.1 ບາດກ້າວ

#### 9.1.1 ບາດກ້າວກະກຽມ

- ບັນດາກົມ, ສະຖາບັນ, ແຕ່ງຕັ້ງຄະນະຮັບຜິດຊອບການເຮັດທົດລອງຂອງຕົນ ແລະ ກອງເລຂາຂອງຄະນະດັ່ງກ່າວຂຶ້ນ ເພື່ອເປັນເສນາທິການ ໃຫ້ຄະນະນຳໃນການຄົ້ນຄວ້າກະກຽມ ແລະ ຊີ້ນຳ-ນຳພາການເຮັດທົດລອງ ຂອງຂັ້ນຕົນ ແລະ ປະສານກັບຄະນະຮັບຜິດຊອບເຮັດທົດລອງຂອງຂັ້ນເທິງຕົນຕາມລຳດັບ ຄາດໝາຍສຳເລັດ ໃນອາທິດທີ 4 ຂອງເດືອນກໍລະກົດ 2012.
- ຄະນະຮັບຜິດຊອບເຮັດທົດລອງຢູ່ຂັ້ນກະຊວງ ເກັບກຳຂໍ້ມູນຮອບດ້ານກ່ຽວກັບສະພາບຄວາມເປັນຈິງ ຂອງວຽກງານດ້ານຕ່າງໆ ຂອງຂະແໜງການຕົນ ແລະ ວາງທິດທາງແຜນການ ຂອງຕົນ ການປະຕິບັດ ຄຳສັ່ງ 3 ສ້າງ ກໍຄືຄຳແນະນຳສະບັບນີ້ ໂດຍກຳນົດເນື້ອໃນ, ຄາດໝາຍທີ່ຈະສູ້ຊົນຈັດຕັ້ງປະຕິບັດໃຫ້ສຳເລັດ ແລະ ຕົວຊີ້ບອກຜົນສຳເລັດໃນການເຮັດທົດລອງຢ່າງລະອຽດ ຄາດໝາຍສຳເລັດ ໃນເດືອນກັນຍາ 2012.
- ຄະນະຮັບຜິດຊອບເຮັດທົດລອງ ຂັ້ນກະຊວງ, ກົມ ລົງສົມທົບກັບທ້ອງຖິ່ນ ເພື່ອປຶກສາຫາ ແລະ ເປັນເອກະພາບກັນເປັນລາຍລັກອັກສອນ ກ່ຽວກັບການແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ, ຜົນປະໂຫຍດ ກ່ຽວກັບວຽກອັນໃດ, ຂະໜາດໃດ ທີ່ແຂວງ ແລະ ເມືອງ ມີສິດຕົກລົງອະນຸມັດ ຫຼື ມີສິດແກ້ໄຂ ໂດຍບໍ່ຕ້ອງຂໍຄຳເຫັນລັດຖະບານ ຫຼື ກະຊວງ ຄາດໝາຍສຳເລັດ ໃນອາທິດທີ 3 ຂອງເດືອນກັນຍາ 2012. ກຳນົດແຜນວຽກ, ແຜນຄົນ, ແຜນເງິນ ໂດຍອີງໃສ່ແຜນດຳເນີນງານ ພັດທະນາກະສິກຳ ແລະ ປ່າໄມ້ ຂອງບັນດາບ້ານເປົ້າໝາຍເຮັດທົດລອງ.
- ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສ້າງແຜນດຳເນີນງານຂອງຕົນ ຄາດໝາຍໃຫ້ສຳເລັດ ໃນອາທິດທີ 4 ຂອງເດືອນ ກັນຍາ 2012.
- ກວດກາໃຫ້ເຫັນບັນດານິຕິກຳ ແລະ ກົນໄກທີ່ມີຢູ່ໃນໄລຍະຜ່ານມາ ມີອັນໃດ ຈຳເປັນຕ້ອງໄດ້ດັດແກ້ ເພື່ອເອື້ອອຳນວຍ ໃຫ້ແກ່ການຈັດຕັ້ງປະຕິບັດຄຳສັ່ງ 3 ສ້າງ, ດຳເນີນການປັບປຸງ, ແກ້ໄຂ ແລະ ສ້ານິຕິກຳ ທີ່ບໍ່ທັນມີຂຶ້ນຕື່ມຫາກມີຄວາມຈຳເປັນ.

#### 9.1.2 ບາດກ້າວຈັດຕັ້ງປະຕິບັດ

- ຈັດຕັ້ງການເຊື່ອມຊຶມ ຄຳສັ່ງເລກທີ 16/ນຍ, ລົງວັນທີ 15 ມິຖຸນາ 2012, ຄຳແນະນຳ ຂອງລັດຖະມົນຕີ ກະຊວງພາຍໃນ ສະບັບເລກທີ 01/ພນ, ລົງວັນທີ 13 ກໍລະກົດ 2012, ຄຳແນະນຳ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບນີ້, ແຜນດຳເນີນງານ ຂອງຕົນ ໃຫ້ພະນັກງານ-ລັດຖະກອນ ເພື່ອໃຫ້ໝົດທຸກຄົນເຂົ້າໃຈເປັນເອກະພາບກັນ ແລະ ຈັດຕັ້ງປະຕິບັດໄປລວງດຽວກັນ. ສຳລັບແຕ່ລະຂັ້ນ ໃຫ້ປະຕິບັດຕາມກົດເວລາດັ່ງນີ້:
  - ກົມ, ສະຖາບັນ, ຫ້ອງການ ອ້ອມຂ້າງກະຊວງ ໃຫ້ສຳເລັດກ່ອນ ວັນທີ 20 ກັນຍາ 2012.
  - ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃຫ້ສຳເລັດກ່ອນ ວັນທີ 25 ກັນຍາ 2012.
  - ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃຫ້ສຳເລັດກ່ອນ ວັນທີ 28 ກັນຍາ 2012.
  - ດຳເນີນການເຮັດທົດລອງໃນທຸກຂັ້ນ ເລີ່ມແຕ່ວັນທີ 1 ຕຸລາ 2012 ເປັນຕົ້ນໄປ.

#### 9.1.3 ບາດກ້າວສະຫຼຸບຖອດຖອນບົດຮຽນ

ໃຫ້ກອງເລຂາ 3 ສ້າງຂອງກະຊວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ບ້ານເປົ້າໝາຍທົດລອງ ດຳເນີນການຈັດຕັ້ງ ສະຫຼຸບ ຖອດຖອນບົດຮຽນຢ່າງຮອບດ້ານ ໂດຍຍົກໃຫ້ເຫັນອັນຖືກ, ອັນຜິດ, ອັນທີ່ສາມາດເຮັດໄດ້ ຫຼື ເຮັດບໍ່ໄດ້ ແລ້ວປະເມີນຜົນໄດ້ຮັບໃນການເຮັດທົດລອງຄັ້ງນີ້ ຢ່າງພາວະວິໄສ.

– ບ້ານເປົ້າໝາຍເຮັດທົດລອງໃຫ້ສຳເລັດກ່ອນວັນທີ 30 ກໍລະກົດ 2012;
– ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໃຫ້ສຳເລັດກ່ອນ ວັນທີ 15 ສິງຫາ 2013;
– ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃຫ້ສຳເລັດກ່ອນວັນທີ 30 ສິງຫາ 2013;
– ກົມ, ສະຖາບັນ, ຫ້ອງການກະຊວງ ໃຫ້ສຳເລັດກ່ອນ ວັນທີ 15 ກັນຍາ 2013;
– ຕິດຕາມຊຸກຍູ້ກວດກາ ແລະ ສະຫຼຸບລາຍງານຜົນການເຮັດທົດລອງໃນເບື້ອງຕົ້ນປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ 6 ຕົ້ນປີ ຕໍ່ຄະນະພັກ ຄະນະນຳກະຊວງ ໃນເດືອນ ເມສາ 2013 ເພື່ອລາຍງານຕໍ່ກອງປະຊຸມສູນກາງຄັ້ງທີ 6 ໃນເດືອນ ພຶດສະພາ 2013;
– ຄົ້ນຄວ້າສ້າງແຜນຜັນຂະຫຍາຍຜົນການເຮັດທົດລອງ (ເດືອນເມສາ-ພຶດສະພາ 2013) ໂດຍຈັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈຳສົກປີ 2013-2014, ຈາກນັ້ນ, ຈຶ່ງສະເໜີຜ່ານລັດຖະບານ ແລະ ສະພາຮັບຮອງ ໃນເດືອນ ມິຖຸນາ 2013;
– ສະຫຼຸບສັງລວມ ແລະ ຖອດຖອນບົດຮຽນຈາກການເຮັດທົດລອງໝົດປີ ລາຍງານຕໍ່ ຄະນະພັກ ຄະນະນຳກະຊວງ ໃນທ້າຍເດືອນກັນຍາ 2013 ເພື່ອລາຍງານຕໍ່ກົມການເມືອງໃນເດືອນຕຸລາ 2013, ຈາກນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສູນກາງຄັ້ງທີ 7 ໃນເດືອນ ພະຈິກ 2013.

**9.2 ມາດຕະການຈັດຕັ້ງປະຕິບັດ**

– ບັນດາທ່ານໃນຄະນະຮັບຜິດຊອບການເຮັດທົດລອງແຕ່ລະຂັ້ນຕ້ອງກຳແໜ້ນ ຄຳສັ່ງ 3 ສ້າງ ແລະ ຄຳແນະນຳຂອງລັດຖະມົນຕີ ສະບັບນີ້ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ການຈັດຕັ້ງປະຕິບັດວຽກງານ ໃຫ້ເປັນເອກະພາບກັນທຸກເປົ້າໝາຍ;
– ຄະນະຮັບຜິດຊອບການເຮັດທົດລອງແຕ່ລະຂັ້ນຕ້ອງປະຕິບັດລະບອບປະຈຳການມີການສັງລວມ, ລາຍງານ ແລະ ສ່ອງແສງ ສະພາບການຈັດຕັ້ງປະຕິບັດເປັນປົກກະຕິ;
– ຄະນະນຳທຸກພາກສ່ວນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຖືເອົາການທົດລອງຄັ້ງນີ້ ເປັນວຽກງານບູລິມະສິດອັນໜຶ່ງຂອງຕົນ;
– ບັນດາທ່ານໃນຄະນະຮັບຜິດຊອບການເຮັດທົດລອງແຕ່ລະຂັ້ນ ຕ້ອງເປັນເຈົ້າການໃນການຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດ ວຽກງານນີ້ຢ່າງຕັ້ງໜ້າ; ຈັດກອງປະຊຸມຄະນະຕາມຄວາມ ຮຽກຮ້ອງຕ້ອງການ ໃນແຕ່ລະໄລຍະເພື່ອຄົ້ນຄວ້າປຶກສາຫາລື ແລະ ແກ້ໄຂບັນຫາຕ່າງໆ ໃຫ້ທັນການ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ມີຜົນນຳໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

ວິໄລວັນ ພົມເຂ

__ບ່ອນນຳສົ່ງ:__

1. ຫ້ອງວ່າການສູນກາງພັກ 01 ສະບັບ
2. ຫ້ອງວ່າການລັດຖະບານ 01 ສະບັບ
3. ຄະນະຮັບຜິດຊອບເຮັດທົດລອງ 3 ສ້າງຂັ້ນສູນກາງ01 ສະບັບ
4. ຫ້ອງວ່າການປົກຄອງແຂວງ, ນະຄອນ ບ່ອນລະ 01 ສະບັບ
5.ເກັບມ້ຽນ 01 ສະບັບ.